ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ທະນາຄານແຫ່ງ ສປປ ລາວ

ເລກທີ: 37 /ທຫລ
ນະຄອນຫຼວງວຽງຈັນ, ວັນທີ 15 ສິງຫາ 2017

**ບົດບັນທຶກກອງປະຊຸມ**
**ສ່ອງແສງວຽກງານສາຍລັດ ປະຈຳເດືອນ ກໍລະກົດ ປີ 2017**

ໃນຕອນເຊົ້າຂອງວັນທີ 8 ສິງຫາ 2017 ເວລາ 08:30 ໂມງ ຢູ່ທີ່ຫ້ອງປະຊຸມໃຫຍ່ຊັ້ນ IV, ທະນາຄານແຫ່ງ ສປປ ລາວ ໄດ້ຈັດກອງປະຊຸມສ່ອງແສງສາຍລັດ ປະຈຳເດືອນ ກໍລະກົດ 2017 ພາຍໃຕ້ການເປັນປະທານຂອງທ່ານ ສົມພາວ ໄຟສິດ ຜູ້ວ່າການ ທຫລ ໂດຍມີບັນດາຄະນະກົມ ແລະ ຄະນະອຳນວຍການທະນາຄານທຸລະກິດລັດເຂົ້າຮ່ວມ (ດັ່ງລາຍຊື່ຄັດຕິດມາພ້ອມນີ້). ກອງປະຊຸມໄດ້ຮັບຟັງການຈັດຕັ້ງປະຕິບັດວຽກງານຂອງບັນດາກົມ ແລະ ທະນາຄານທຸລະກິດລັດ ໃນໄລຍະ 1 ເດືອນຜ່ານມາ. ຊຶ່ງໂດຍລວມສາມາດຮັກສາສະຖຽນລະພາບເງິນຕາແຫ່ງຊາດໄດ້ຢ່າງໝັ້ນທ່ຽງ, ອັດຕາເງິນເຟີ້ຢູ່ໃນລະດັບຕ່ຳກວ່າການຂະຫຍາຍຕົວຂອງ GDP, ອັດຕາແລກປ່ຽນມີຄວາມສະຫງົບປົກກະຕິ. ພ້ອມນີ້, ທີ່ພົ້ນເດັ່ນໃນເດືອນຜ່ານມາ ແມ່ນ ສທຄ ໄດ້ສຳເລັດການຄົ້ນຄວ້າຫຼັກສູດປະລິນຍາຕີ ເຊິ່ງປະຈຸບັນແມ່ນໄດ້ຮັບການເຫັນດີ ແລະ ອະນຸມັດຈາກກະຊວງສຶກສາທິການ ແລະ ກິລາ ແລ້ວ, ສປປ ລາວ ກໍ່ໄດ້ຮັບການຮັບຮອງຈາກສາກົນ ໃຫ້ຫຼຸດພົ້ນອອກຈາກບັນຊີສີເທົາ ມາຢູ່ບັນຊີປົກກະຕິ, ແລະ ທຫລ ໄດ້ລາຍງານສະພາບການເຄື່ອນໄຫວຂອງ ບໍລິສັດພີເອັສ ສົ່ງເສີມກະສິກຳຂາອອກ-ຂາເຂົ້າຄົບວົງຈອນ ຈຳກັດ ໄປຍັງລັດຖະບານເປັນທີ່ຮຽບຮ້ອຍແລ້ວ. ນອກຈາກນີ້, ທະນາຄານທຸລະກິດລັດ ຍັງໄດ້ແຈ້ງຕໍ່ທີ່ປະຊຸມຊາບຕໍ່ກັບບັນຫາຂອງລູກຄ້າສິນເຊື່ອທີ່ຕິດພັນກັບໂຄງການຂອງລັດຖະບານ ບໍ່ສາມາດສືບຕໍ່ຈ່າຍເງິນຕົ້ນທຶນ ແລະ ດອກເບ້ຍໄດ້ ຍ້ອນຄວາມຫຍຸ້ງຍາກຂອງງົບປະມານພາກລັດ ເຊິ່ງຕໍ່ກັບບັນຫາດັ່ງກ່າວແມ່ນໃຫ້ຄົ້ນຄວ້າມາດຕະການຮັບຮອງບັນຫາທີ່ລູກຄ້າສິນເຊື່ອທີ່ບໍ່ສາມາດຊຳລະຕົ້ນທຶນ ແລະ ດອກເບ້ຍໃຫ້ແກ່ທະນາຄານ ຍ້ອນສະພາບເສດຖະກິດ ແລະ ຄວາມຫຍຸ້ງຍາກຂອງງົບປະມານພາກລັດ.

**ທີ່ປະຊຸມຍັງໄດ້ມີຂໍ້ສະເໜີຈາກບັນດາກົມ ແລະ ທະນາຄານທຸລະກິດລັດ ຊຶ່ງຜ່ານການປຶກສາຫາລືຢ່າງກົງໄປກົງມາ ກອງປະຊຸມໄດ້ເຫັນດີເປັນເອກະພາບດັ່ງລຸ່ມນີ້:**

1. ມອບໃຫ້ ສຄຄຊ ແລະ ຕະຫຼາດຫຼັກຊັບລາວ ເອົາໃຈໃສ່ຜັນຂະຫຍາຍເນື້ອໃນຈິດໃຈຂອງບົດບັນທຶກຊ່ວຍຈຳ (MOU) ລະຫວ່າງ ທຫລ ແລະ KRX ທີ່ໄດ້ເຊັນກັນໃນເດືອນ 07/2017 ໃຫ້ໄດ້ຮັບປະສິດທິຜົນແຕ່ລະດ້ານຢ່າງຕັ້ງໜ້າ.
2. ມອບໃຫ້ກົມນະໂຍບາຍເງິນຕາ ຄົ້ນຄວ້າຢ່າງເລິກເຊິ່ງ ກ່ຽວກັບການເຄື່ອນໄຫວຂອງທະນາຄານກຸງສີອະຍຸດທະຍາ ຈຳກັດ (ມະຫາຊົນ) ທີ່ມີການໂອນເງິນບາດເຂົ້າມາ ສປປ ລາວ ແລະ ໂອນເງິນໂດລາອອກ ສປປ ລາວ ອາດກະທົບຕໍ່ສະຖຽນລະພາບຂອງຄ່າເງິນກີບ ຊຶ່ງຖ້າວ່າການເຄື່ອນໄຫວດັ່ງກ່າວມີຜົນກະທົບຕໍ່ຄ່າເງິນກີບກໍ່ໄດ້ມີມາດຕະການຕໍ່ທະນາຄານດັ່ງກ່າວ.
3. ມອບໃຫ້ ສຕຟງ ສືບຕໍ່ເອົາໃຈໃສ່ຈັດຕັ້ງປະຕິບັດບັນດາຂໍ້ຄົງຄ້າງທີ່ APG ໄດ້ແນະນຳ.
4. ມອບໃຫ້ກົມພົວພັນສາກົນກະກຽມຄວາມພ້ອມຕ່າງໆໃນການເປັນເຈົ້າພາບຈັດກອງປະຊຸມ ລະດັບຮອງຜູ້ວ່າການທະນາຄານກາງອາຊຽນ (Senior Level Committee) ໃຫ້ໄດ້ຮັບຜົນສຳເລັດຮອບດ້ານ.
5. ມອບໃຫ້ກອງທຶນປົກປ້ອງຜູ້ຝາກເງິນ ເອົາໃຈໃສ່ຕິດຕາມການປັບປຸງດຳລັດວ່າດ້ວຍການປົກປ້ອງເງິນຝາກ ພາຍຫຼັງໄດ້ຮັບການຮັບຮອງຈາກກອງປະຊຸມລັດຖະບານ ເຊິ່ງປະຈຸບັນແມ່ນຢູ່ໃນຂັ້ນຕອນລໍຖ້າການຮັບຮອງຈາກລັດຖະບານ.

6. ມອບໃຫ້ກົມເງິນຕາ ສົມທົບກັບ ທຫລ ປະຈຳພາກ ເພື່ອເປັນໃຈກາງໃນການຄົ້ນຄວ້າຮູບແບບການໂຄສະນາເຜີຍແຜ່ກ່ຽວກັບການສັງເກດທະນະບັດປອມ ນອກຈາກທີ່ໄດ້ຈັດຕັ້ງປະຕິບັດຜ່ານມາ.
7. ມອບໃຫ້ໂຮງພິມທະນະບັດ ເອົາໃຈໃສ່ຈັດພິມທະນະບັດທີ່ມອບໃນແຜນໃຫ້ຮັບປະກັນດ້ານຄຸນນະພາບ.
8. ມອບໃຫ້ສະຖາບັນການທະນາຄານ ຄົ້ນຄວ້າຮູບແບບການມອບໃບປະກາດໃຫ້ແກ່ນັກສຶກສາທີ່ຈົບຈາກສະຖາບັນການທະນາຄານ ປະຈຳສົກປີ 2016-2017 ຈຳນວນ 600 ຄົນ ໃນຮູບແບບທີ່ເໝາະສົມກັບສະຖາບັນການສຶກສາອື່ນ ເນື່ອງຈາກໃນປະຈຸບັນສະຖາບັນການສຶກສາອື່ນໆ ບໍ່ໄດ້ຈັດພິທີມອບ-ຮັບໃບປະກາດ.
9. ໃຫ້ບັນດາກົມ, ທຽບເທົ່າກົມ ແລະ ທະນາຄານທຸລະກິດລັດ ສືບຕໍ່ຈັດຕັ້ງປະຕິບັດແຜນການທີ່ຕົນໄດ້ຂຶ້ນໄວ້ນັ້ນ ໃຫ້ໄດ້ຮັບຜົນສຳເລັດເປັນຢ່າງດີ.
10. ມອບໃຫ້ຫ້ອງການ ທຫລ ເປັນໃຈກາງໃນການກະກຽມ: (1) ບັນດາເອກະສານຕ່າງໆ ເປັນຕົ້ນ: ບົດສະຫຼຸບຈັດຕັ້ງປະຕິບັດແຜນເງິນຕາ 6 ເດືອນຕົ້ນປີ 2017, ແຜນການ 6 ເດືອນທ້າຍປີ 2017 ແລະ ທິດທາງແຜນການປະຈຳປີ 2018 ເພື່ອລາຍງານຕໍ່ກອງປະຊຸມລັດຖະບານ ປະຈຳເດືອນ 09/2017, ກອງປະຊຸມສູນກາງ ແລະ ກອງປະຊຸມສະພາແຫ່ງຊາດ. (2) ພ້ອມທັງສືບຕໍ່ເອົາໃຈໃສ່ກະກຽມກອງປະຊຸມສະພາບໍລິຫານທະນາຄານແຫ່ງ ສປປ ລາວ ເປັນຕົ້ນ: ເອກະສານທີ່ຈະນຳເຂົ້າຜ່ານກອງປະຊຸມດັ່ງກ່າວ. (3) ໃຫ້ຄົ້ນຄວ້ານິຕິກຳໃນການຫຼຸ້ນຫວຍຂອງພະນັກງານບັນດາກົມພາຍໃນ ທຫລ ໃຫ້ຊັດເຈນບົນຈິດໃຈແມ່ນໃຫ້ຢຸດຕິ ເນື່ອງຈາກການຫຼຸ້ນຫວຍແມ່ນບໍ່ຖືກຕ້ອງຕາມລະບຽບກົດໝາຍ.
11. ວຽກງານຄະນະຕ່າງໆ:
    - ໃຫ້ຄະນະຮັບຜິດຊອບສ້າງ ແລະ ປັບປຸງກົດໝາຍ ຕາມແຜນທີ່ສະພາແຫ່ງຊາດຮອງຮັບ ສືບຕໍ່ເອົາໃຈໃສ່ຄົ້ນຄວ້າໃຫ້ສຳເລັດຕາມກອບເວລາທີ່ກຳນົດໄວ້.
    - ໃຫ້ຄະນະຮັບຜິດຊອບຮ່າງນະໂຍບາຍສິນເຊື່ອ ເພື່ອສົ່ງເສີມທຸລະກິດຂະໜາດກາງ ແລະ ຂະໜາດນ້ອຍ (SME) ໃຫ້ຮີບຮ້ອນສຳເລັດ.
12. ມອບໃຫ້ກົມນະໂຍບາຍເງິນຕາ ແລະ ກົມບໍລິການ ສືບຕໍ່ເອົາໃຈໃສ່ແກ້ໄຂສະພາບຄວາມຕ້ອງການເງິນຕາຕ່າງປະເທດໃຫ້ມີສະພາບຄ່ອງເປັນຢ່າງດີ ແລະ ສະພາບຄວາມແຕກໂຕນທາງດ້ານອັດຕາແລກປ່ຽນ.
13. ໃຫ້ທະນາຄານທຸລະກິດລັດ 3 ແຫ່ງ (ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ, ທະນາຄານພັດທະນາລາວ ແລະ ທະນາຄານສົ່ງເສີມກະສິກຳ) ລາຍງານຂໍ້ມູນໃຫ້ຫ້ອງການ ທຫລ ດັ່ງລຸ່ມນີ້:
    - ການປ່ອຍສິນເຊື່ອໃຫ້ແກ່ລູກຄ້າລາຍໃຫຍ່ ຈຳນວນ 20 ລາຍການ ທັງ 3 ສະກຸນເງິນ ຄື: ເງິນກີບ, ເງິນບາດ ແລະ ເງິນໂດລາ ໂດຍນຳສົ່ງໃຫ້ຫ້ອງການ ໃນວັນທີ 9 ສິງຫາ 2017 ເພື່ອລາຍງານທ່ານຜູ້ວ່າການໃນຂັ້ນຕໍ່ໄປ.
    - ສຳລັບລາຍງານທີ່ນຳສົ່ງພາຍໃນວັນທີ 10 ສິງຫາ 2017 ປະກອບດ້ວຍ: 1) ການປ່ອຍກູ້ໃຫ້ແກ່ໂຄງການກໍ່ສ້າງພື້ນຖານໂຄງລ່າງຂອງລັດ ຮອດເດືອນ 06/2017. 2) ພັນທະບັດຊຳລະໜີ້ເງິນກູ້ ແລະ ພັນທະບັດຄ້ຳປະກັນ. 3) ພັນທະບັດທີ່ຊື້ໂດຍກົງຈາກກະຊວງການເງິນ ຫຼື ຜ່ານການປະມູນຈາກທະນາຄານແຫ່ງ ສປປ ລາວ.

ກອງປະຊຸມໄດ້ປິດລົງໃນເວລາ 11:15 ໂມງ ຂອງພາກເຊົ້າວັນດຽວກັນ.

ປະທານກອງປະຊຸມ | ຜູ້ບັນທຶກກອງປະຊຸມ

ດຣ ສົມພາວ ໄຟສິດ | ພອນສະໄໝ ພະໄຊ

ລາຍຊື່ລົງທະບຽນຜູ້ເຂົ້າຮ່ວມກອງປະຊຸມຮັບສ່ອງແສງບັນດາໜ່ວຍພັກ, ຄະນະພັກຮາກຖານ ແລະ 3 ອົງການຈັດຕັ້ງມະຫາຊົນ ປະຈໍາເດືອນ 7/2017, ຄັ້ງວັນທີ 8 ສິງຫາ 2017.

| ລ/ດ | ຊື່ ແລະ ນາມສະກຸນ | ຕໍາແໜ່ງພັກ | ພາກສ່ວນ | ເບີຕິດຕໍ່ | ລາຍເຊັນ |
|---|---|---|---|---|---|
| 1 | ສະຫາຍ ປອ. ສົມພາວ ໄຟສິດ | ເລຂາຄະນະພັກ ທຫລ | ປະທານ | | |
| 2 | ສະຫາຍ ພຸດທະໄຊ ສີວິໄລ | ຄະນະປະຈໍາພັກ ທຫລ/ ເລຂາໜ່ວຍພັກ | ກທຄ | 55725730 | [signature] |
| 3 | ສະຫາຍ ນ. ດວງດີ ພົມວົງສາ | ຄະນະພັກ ທຫລ/ ເລຂາຄະນະພັກຮາກຖານ | ສທຄ | 22221032 | [signature] |
| 4 | ສະຫາຍ ໜໍ່ແກ້ວ ມຸນີວົງ | ຄະນະພັກ ທຫລ ເລຂາໜ່ວຍພັກ | ກກ | 23988799 | [signature] |
| 5 | ສະຫາຍ ນ. ສາຍສະໝອນ ຈັນທະຈັກ | ຄະນະພັກ ທຫລ ເລຂາໜ່ວຍພັກ | ສຄຄຊ | 55910197 | [signature] |
| 6 | ສະຫາຍ ພູຊົງ ຈັນທະຈັກ | ຄະນະພັກ ທຫລ/ ເລຂາຄະນະພັກຮາກຖານ | ທຄຕລ | 55528366 | [signature] |
| 7 | ສະຫາຍ ບົວລຽນ ພົມມະວົງສາ | ຄະນະພັກ ທຫລ/ ເລຂາຄະນະພັກຮາກຖານ | ທພລ | 22340089 | [signature] |
| 8 | ສະຫາຍ ປອ. ສັນຕິ ພົນເມືອງລາວ | ເລຂາໜ່ວຍພັກ | ຣທພ | 99931963 | [signature] |
| 9 | ສະຫາຍ ສີວິໄລ ພົມມະຈັກ | ເລຂາໜ່ວຍພັກ | ກງຕ | 22400078 | [signature] |
| 10 | ສະຫາຍ ອ໊ອດ ພົນຊຽງດີ | ເລຂາໜ່ວຍພັກ | ກພສ | 22220713 | [signature] |
| 11 | ສະຫາຍ ນ. ແສງດາວວີ ວົງຄໍາຊາວ | ເລຂາໜ່ວຍພັກ | ກປທ | 22887985 | [signature] |
| 12 | ສະຫາຍ ນ. ອ່ອນຈັນ ໄຊຄໍາເພັງ | ເລຂາໜ່ວຍພັກ | ສກໜ | 23030558 | ບໍລະບາຍ ພົນໄຊຫລັ |
| 13 | ສະຫາຍ ເພັດສະຖາພອນ ແກ້ວວົງວິຈິດ | ເລຂາໜ່ວຍພັກ | ຫກ | 77511041 | [signature] |
| 14 | ສະຫາຍ ໄຂ່ແກ້ວ ຫຼວງສີວິໄລ | ເລຂາໜ່ວຍພັກ | ກຕຂ | 22220756 | [signature] |
| 15 | ສະຫາຍ ວົງພະຈັນ ແສງສຸວັນ | ຮອງເລຂາຄະນະພັກຮາກ ຖານ | ສທຄ | 22221039 | [signature] |

| ລ/ດ | ຊື່ ແລະ ນາມສະກຸນ | ຕຳແໜ່ງພັກ | ພາກສ່ວນ | ເບີຕິດຕໍ່ | ລາຍເຊັນ |
|---|---|---|---|---|---|
| 16 | ສະຫາຍ ນ. ໄກສອນ ໄຊຍະພອນ | ຮອງເລຂາໜ່ວຍພັກ | ກຈພ | 55727995 | |
| 17 | ສະຫາຍ ນ. ອິນຄຳ ລຸນທອນ | ຮອງເລຂາໜ່ວຍພັກ, ຮອງເລຂາ ຄະນະບໍລິຫານງານຊາວໜຸ່ມ ທຫລ | ຄສໜ.ທຫລ | 22209999 | |
| 18 | ສະຫາຍ ພອນສະຫວັນ ຄຳພາວົງ | ຮອງເລຂາໜ່ວຍພັກ | ກບງ | 55878888 | |
| 19 | ສະຫາຍ ນ. ຄຳເພີຍ ວໍລະເດດ | ກຳມະການໜ່ວຍພັກ | ບກ | [illegible] ~~59888439~~ | |
| 20 | ສະຫາຍ ຈິນດາໄນ ວິໄລທິງສ໌ | ກຳມະການໜ່ວຍພັກ | ສຄຕຟງ | 77708860 | |
| 21 | ສະຫາຍ ຄຳອິ້ນ ຈັນສຸລິມາດ | ຄະນະພັກຮາກຖານ | ຫນບ | | |
| 22 | ສະຫາຍ ພັນທະບູນ ໄຍະເພັດ | ຮອງຫົວໜ້າກົມ | ກຄສງ | 55515881 | |
| 23 | ສະຫາຍ ຄຳແກ້ວ ວິສີສິມບັດ | ຮອງຜູ້ອຳນວຍການ | ທສກ | 58888519 | |
| 24 | ສະຫາຍ ແສງເພັດ ມະນີວົງ | ຄະນະສະຫະພັນກຳມະບານ ທຫລ | | | ບໍ່ລະບາຍ ມອບໃຫ້ ສ/ທ ວົງພະນັນ ແສງຮັວນ ເປັນ |
| 26 | ທ. ສຸກັນ ລມັງທະວົງ | ຮອງເລຂາໜ່ວຍ | [illegible] | 55349286 | |
| 27 | | | | | |
| 28 | ສະຫາຍ ນ. ສີພະຈັນ ເຂັມມະນີວົງ | ຫົວໜ້າພະແນກພັກ ແລະ ອົງການຈັດຕັ້ງມະຫາຊົນ | ກຈພ | 55535192 | |
| 29 | ສະຫາຍ ນ. ກິ່ງມະນີ ສີລາວົງ | ຮອງຫົວໜ້າພະແນກພັກ ແລະ ອົງການຈັດຕັ້ງ | ກຈພ | 55888879 | |
| 30 | ສະຫາຍ ນ. ດອນສະຫວັນ ໄຜ່ມະນີ | ຮອງຫົວໜ້າພະແນກ ກວດກາພັກ | ກກ | 55117778 | |
| 31 | ສະຫາຍ ອຳພອນໄຊ ສະກຸນດາ | ຮອງຫົວໜ້າພະແນກປ້ອງກັນພັກ-ພະນັກງານ | ກຈພ | 55666747 | |
| 32 | ສະຫາຍ ນ. ພອນສະໄໝ ພະໄຊ | ຮອງຫົວໜ້າພະແນກ ສັງລວມ | ຫກ | 22223696 | |

ນະຄອນຫຼວງວຽງຈັນ, ວັນທີ 8 ສິງຫາ 2017